ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕເອກະພາບ ວັດທະນາຖາວອນ

----===000===------

ກະຊວງ ກະສິກຳ ແລະ ປ່າໄມ້.

ເລກທີ 0063 /ກປ

ນະຄອນຫຼວງວຽງຈັນ, ວັນທີ 27 JAN 2010

# ຂໍ້ຕົກລົງ
# ຂອງລັດຖະມົນຕີວ່າການ
# ວ່າດ້ວຍ ລະບຽບການຄຸ້ມຄອງ ແລະ ນຳໃຊ້
# ແຫຼ່ງແນວພັນໄມ້ ໃນ ສປປ ລາວ.

- ອີງຕາມ ກົດໝາຍປ່າໄມ້ ສະບັບເລກທີ 06/ສພຊ, ລົງວັນທີ 24 ທັນວາ 2007.
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງ ກະຊວງກະສິກຳ ແລະ ປ່າໄມ້ ເລກທີ 148/ນຍ,ລົງວັນທີ 10/5/2007.
- ອີງຕາມການຕົກລົງຂອງກອງປະຊຸມສະພາວິທະຍາສາດເຕັກນິກກະສິກຳ-ປ່າໄມ້, ຄັ້ງວັນທີ 13 ຕຸລາ 2009.

**ລັດຖະມົນຕີວ່າການ ກະຊວງກະສິກຳ ແລະ ປ່າໄມ້ ອອກຂໍ້ຕົກລົງດັ່ງນີ້ :**

## ໝວດທີ 1.
## ບົດບັນຍັດທົ່ວໄປ

**ມາດຕາ 1: ຈຸດປະສົງ.**

ລະບຽບການສະບັບນີ້ ກຳນົດມາດຕະການພື້ນຖານ ກ່ຽວກັບ ການຄຸ້ມຄອງ, ປົກປັກຮັກສາ ແຫຼ່ງພັນໄມ້ ແນໃສ່ ພັດທະນາ ແລະ ນຳໃຊ້ ແນວພັນໄມ້ ທີ່ມີ ຄຸນນະພາບ ແລະ ມີຄວາມຍືນຍົງ

**ມາດຕາ 2. ການອະທິບາຍສັບ**

1. ແຫຼ່ງແນວພັນໄມ້ໝາຍເຖິງ ເນື້ອທີ່ປ່າໄມ້ໃດໜຶ່ງ ທີ່ ກຳນົດຂອບເຂດ ເພື່ອຕອບສະໜອງ ແນວພັນໄມ້;

2. ຕົ້ນໄມ້ແມ່ພັນ ໝາຍເຖິງ ຕົ້ນໄມ້ ທີ່ ຖືກຄັດເລືອກ ແລະ ຂຶ້ນບັນຊີ ເພື່ອເກັບແກ່ນ ຫຼື ຊິ້ນສ່ວນຕ່າງໆ ສໍາລັບຂະຫຍາຍພັນ;
3. ແກ່ນພັນໄມ້ ໝາຍເຖິງ ແກ່ນ ທີ່ໄດ້ຈາກຕົ້ນແມ່ພັນ ແລະ ຜ່ານຂະບວນການຈັດການ ຕາມຂັ້ນຕອນ ເພື່ອໃຫ້ໄດ້ແກ່ນພັນໄມ້ ທີ່ມີຄຸນນະພາບດີ;
4. ຊິ້ນສ່ວນ ໝາຍເຖິງ ຮາກ, ເຫງົ້າ, ເປືອກ, ກິ່ງ, ຕາ, ຍອດ, ດອກ ແລະ ໃບ ຂອງຕົ້ນແມ່ພັນ.

## ໝວດທີ 2
## ການກໍານົດພື້ນທີ່ ແລະ ການສ້າງແຫຼ່ງແນວພັນໄມ້

**ມາດຕາ 3. ການກໍານົດພື້ນທີ່.**

ແຫຼ່ງແນວພັນໄມ້ ສາມາດສ້າງຂຶ້ນໄດ້ໃນ ພື້ນທີ່ປ່າປ້ອງກັນ, ປ່າສະຫງວນ ແລະ ປ່າຜະລິດ. ເນື້ອທີ່ແຫຼ່ງແນວພັນໄມ້ ໃນປ່າທໍາມະຊາດ ຕ້ອງມີເນື້ອທີ່ 25 ເຮັກຕາ ຂຶ້ນໄປ, ຍົກເວັ້ນ ກໍລະນີ ໄມ້ ທີ່ຫາຍາກ ແລະ ໃກ້ຈະສູນພັນ. ສໍາລັບປ່າປູກ ຄວນມີເນື້ອທີ່ 1 ເຮັກຕາ ຂຶ້ນໄປ.

**ມາດຕາ 4. ການສ້າງ ແລະ ຂຶ້ນທະບຽນແຫຼ່ງພັນໄມ້.**

1. ສໍາຫຼວດ ແລະ ກໍານົດພື້ນທີ່ຕົວຈິງ
2. ຄັດເລືອກ ຕົ້ນໄມ້ແມ່ພັນ
3. ເຮັດບົດບັນທຶກການນໍາໃຊ້ຮ່ວມກັນອໍານາດການປົກຄອງບ້ານ.

**ມາດຕາ 5. ແຫຼ່ງແນວພັນໄມ້.**

ເນື້ອທີ່ແຫຼ່ງແນວພັນໄມ້ ທີ່ໄດ້ຮັບຮອງແລ້ວ ແມ່ນມີເຄື່ອງໝາຍຕົ້ນຕໍ ດັ່ງນີ້:
- ປ້າຍໝາຍແຫຼ່ງແນວພັນ.
- ປ້າຍໝາຍເບີຕົ້ນໄມ້ແມ່ພັນ.
- ຫຼັກໝາຍເຂດແດນ.

## ໝວດທີ 3
## ການຄຸ້ມຄອງ, ປົກປັກຮັກສາ ແລະ ນໍາໃຊ້ແຫຼ່ງແນວພັນໄມ້

**ມາດຕາ 6. ການຄຸ້ມຄອງ**

ລັດ ມອບໃຫ້ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ສົມທົບ ກັບ ການຈັດຕັ້ງບ້ານ ເປັນຜູ້ຄຸ້ມຄອງ ແລະ ນຳໃຊ້ແຫຼ່ງແນວພັນໄມ້ ທີ່ ໄດ້ສ້າງຂຶ້ນ ໃນຂອບເຂດຄວາມຮັບຜິດຊອບ ຂອງ ບ້ານ ພາຍໃຕ້ການຊີ້ນຳ, ຊຸກຍູ້, ຕິດຕາມ ແລະ ກວດກາ ຂອງ ພະແນກກະສິກຳ ແລະ ປ່າໄມ້/ຂະແໜງ ປ່າໄມ້ແຂວງ.

ແຫຼ່ງແນວພັນໄມ້ ທຸກແຫຼ່ງ ໄດ້ມີແຜ່ນທີ່, ທີ່ໄດ້ລະບຸຂອບເຂດ, ທີ່ຕັ້ງ, ຈຳນວນ ແລະ ຊະນິດພັນໄມ້ ໄວ້ຢ່າງຈະແຈ້ງ ເພື່ອໃຫ້ແຂວງ ແລະ ເມືອງ ນຳໃຊ້ເຂົ້າໃນການຕິດຕາມກວດກາ ແລະ ຄຸ້ມຄອງແຫຼ່ງແນວພັນໄມ້ ແຕ່ລະແຫຼ່ງ.

**ມາດຕາ 7. ການປົກປັກຮັກສາ**

ລັດມອບໃຫ້ການຈັດຕັ້ງບ້ານ/ກຸ່ມບ້ານ ພ້ອມດ້ວຍປະຊາຊົນ ໂດຍສົມທົບກັບຂະແໜງ ການອື່ນທີ່ກ່ຽວຂ້ອງ ດຳເນີນ ການກວດກາ ລາດຕະເວນ ເພື່ອປ້ອງກັນບໍ່ໃຫ້ມີການ ບຸກລຸກ, ທຳລາຍ, ຖາງ, ຈູດ, ຕັດໄມ້ ຫຼື ຮູບການອື່ນໆ ທີ່ ຈະມີຜົນກະທົບຕໍ່ຕົ້ນໄມ້ ແມ່ພັນ. ກໍລະນີຈຳເປັນ ທີ່ຈະຕ້ອງໄດ້ຕັດໄມ້ແມ່ພັນອອກ ຍ້ອນເກີດໄພທຳມະຊາດ ຫຼື ມີພະຍາດ ແລະ ບົ້ງແມງທຳລາຍ ຕ້ອງໄດ້ຮັບອະນຸຍາດ ຈາກກະຊວງ ກະສິກຳ ແລະ ປ່າໄມ້ ເສຍກ່ອນ.

ຕົ້ນໄມ້ ແມ່ພັນ ທີ່ໄດ້ຄັດເລືອກໄວ້ ຢູ່ໃນຂອບເຂດປ່າໄມ້ທຳມະຊາດ ຫຼື ໃນສວນປູກໄມ້ ທີ່ຢູ່ໃນການຄຸ້ມຄອງ ຂອງ ບຸກຄົນນັ້ນ, ຖ້າມີຄວາມຈຳເປັນ ຕ້ອງຂຸດຄົ້ນເພື່ອນຳໃຊ້ປະໂຫຍດໄມ້ ຕ້ອງ ດຳເນີນການໄປຕາມລະບຽບການ ກ່ຽວຂ້ອງ ແລະ ໄດ້ຮັບອະນຸຍາດ ຈາກ ພະແນກກະສິກຳ ແລະ ປ່າ ໄມ້ແຂວງ ໂດຍຜ່ານ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ແລະ ໜ່ວຍງານປ່າໄມ້ບ້ານ.

**ມາດຕາ 8. ການນຳໃຊ້ແຫຼ່ງແນວພັນໄມ້**

1. ລັດ ອະນຸຍາດໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງບ້ານ ເກັບແກ່ນໄມ້ ໃນ ຂອບເຂດແຫຼ່ງແນວພັນໄມ້ ທີ່ຕົນເອງ ຄຸ້ມຄອງ ແລະ ປົກປັກຮັກສາ ຕາມລະບຽບການເກັບແກ່ນແບບມີສ່ວນຮ່ວມ.
2. ກໍລະນີ ພະນັກງານປ່າໄມ້ຈາກ ສູນກາງ, ແຂວງ, ເມືອງ ຕ້ອງການເກັບແກ່ນໄມ້ ຫຼື ຊິ້ນສ່ວນຕ່າງໆ ຂອງຕົ້ນແມ່ພັນ ຈາກແຫຼ່ງແນວພັນໃດໜຶ່ງ ຕ້ອງລົງສົມທົບອົງການຈັດຕັ້ງບ້ານກ່ຽວຂ້ອງຮ່ວມກັນຈັດຕັ້ງປະຕິບັດ.

**ມາດຕາ 9. ການຄຸ້ມຄອງແນວພັນໄມ້**

1. ການສົ່ງອອກແນວພັນໄມ້ທີ່ຫວງຫ້າມ ທີ່ມີລາຍຊື່ຢູ່ໃນບັນຊີສິນທິສັນຍາສາກົນ ຕ້ອງໄດ້ຜ່ານການເຫັນດີຂອງລັດຖະບານ.

2. ການຢັ້ງຢືນມາດຕະຖານແນວພັນໄມ້ ເພື່ອສົ່ງອອກ ແລະ ນໍາເຂົ້າຕ້ອງມີຂໍ້ຕົກລົງຈາກອົງການກ່ຽວຂ້ອງ ທີ່ ກະຊວງກະສິກໍາ ແລະ ປ່າໄມ້ໄດ້ມອບໝາຍ.
3. ການເຄື່ອນຍ້າຍແນວພັນໄມ້ ຈາກແຫຼ່ງແນວພັນໃດໜຶ່ງ ຕ້ອງມີການຢັ້ງຢືນຈາກ ພະແນກກະສິກໍາ ແລະ ປ່າໄມ້ແຂວງ, ນະຄອນຫຼວງ ບ່ອນທີ່ແຫຼ່ງແກ່ນແນວພັນໄມ້ສັງກັດຢູ່.

## ໝວດທີ 4
## ສິດ ແລະ ໜ້າທີ່ ໃນການຄຸ້ມຄອງແຫຼ່ງແນວພັນໄມ້

**ມາດຕາ 10. ສິດ ແລະ ໜ້າທີ່ຂອງ ກົມ, ກອງສົ່ງເສີມ ແລະ ສະຖາບັນຄົ້ນຄວ້າ ທີ່ກ່ຽວຂ້ອງ**

1. ຊຸກຍູ້, ຕິດຕາມ ປະເມີນຜົນການຈັດຕັ້ງປະຕິບັດການຄຸ້ມຄອງ, ປົກປັກຮັກສາ ແລະ ນໍາໃຊ້ແຫຼ່ງແນວພັນໄມ້.
2. ຝຶກອົບຮົມດ້ານວິຊາການພື້ນຖານກ່ຽວຂ້ອງໃຫ້ ແກ່ ພ່ອຍງານປ່າໄມ້ບ້ານ ເພື່ອ ຍົກປະສິດທິຜົນ ຂອງ ການຄຸ້ມຄອງ, ນໍາໃຊ້ ແຫຼ່ງແນວພັນ.
3. ຄົ້ນຄວ້າ ແລະ ຢັ້ງຢືນຄຸນນະພາບແນວພັນ ເພື່ອການສົ່ງອອກ ແລະ ນໍາເຂົ້າ.
4. ສົ່ງເສີມ ແລະ ນໍາໃຊ້ແນວພັນໄມ້ ທີ່ໄດ້ຮັບການຢັ້ງຢືນ ລົງສູ່ການຜະລິດ.
5. ຄົ້ນຄວ້າ ວິທະຍາສາດເຕັກນິກ ເພື່ອປັບປຸງ ພັດທະນາແຫຼ່ງແນວພັນໄມ້.

**ມາດຕາ 11. ສິດ ແລະ ໜ້າທີ່ ຂອງ ພະແນກກະສິກໍາ ແລະ ປ່າໄມ້ແຂວງ, ນະຄອນຫຼວງ**

1. ຜັນຂະຫຍາຍ ແລະ ເຜີຍແຜ່, ແນະນໍາ ລະບຽບການຄຸ້ມຄອງ ແລະ ນໍາໃຊ້ແຫຼ່ງແນວພັນໄມ້.
2. ຊຸກຍູ້, ຊີ້ນໍາ, ຕິດຕາມກວດກາ ແລະ ຕິດຕາມປະເມີນຜົນການຄຸ້ມຄອງ ແລະ ນໍາໃຊ້ແຫຼ່ງແນວພັນໄມ້ ຂອງ ຫ້ອງການກະສິກໍາ ແລະ ປ່າໄມ້ເມືອງ ແລະ ເທດສະບານ.
3. ຄຸ້ມຄອງການເຄື່ອນຍ້າຍແນວພັນ ທີ່ເກັບໄດ້ ພາຍໃນແຂວງ ຂອງຕົນ.
4. ສະຫຼຸບລາຍງານຜົນການຄຸ້ມຄອງ ແລະ ນໍາໃຊ້ແຫຼ່ງແນວພັນໄມ້ ໃຫ້ ກະຊວງ, ແຂວງ ແລະ ນະຄອນຫຼວງ ຢ່າງເປັນປົກກະຕິ.

**ມາດຕາ 12. ສິດ ແລະ ໜ້າທີ່ ຂອງ ຫ້ອງການກະສິກໍາ ແລະ ປ່າໄມ້ ເມືອງ, ເທດສະບານ**

1. ຊຸກຍູ້, ຊີ້ນໍາ, ຕິດຕາມ, ກວດກາ ພ່ອຍງານປ່າໄມ້ເມືອງ, ພ່ອຍງານປ່າໄມ້ບ້ານ ແລະ ປະຊາຊົນ ກ່ຽວກັບການຄຸ້ມຄອງ, ປົກປັກສາ, ພັດທະນາ ແລະ ນໍາໃຊ້ ແຫຼ່ງແນວພັນໄມ້.